Washington State
Health Care Authority

# Washington Apple Health
# ສິດທິໃນການຟັງເຣື່ອງຈາກອຳນາດການປົກຄອງ ແລະ ວັນທີສຸດຂາດ

ທ່ານມີສິດທິໃນການຟັງເຣື່ອງຈາກອຳນາດການປົກຄອງຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນຂອງພວກເຮົາທີ່ໄດ້ປະຕິເສດ, ສິ້ນສຸດລົງ, ຫລື ປ່ຽນແປງການຄຸ້ມກັນ Washington Apple Health ຂອງທ່ານ.

- ທ່ານມີເວລາ 90 ວັນຈາກວັນທີຢູ່ຂ້າງເທິງຂອງໃບແຈ້ງການໃບນີ້ທີ່ພວກເຮົາໄດ້ສົ່ງໄປໃຫ້ທ່ານເພື່ອຈະຈະຮ້ອງຂໍເອົາການຟັງເຣື່ອງ. ຖ້າຫາກວ່າທ່ານບໍ່ຮ້ອງຂໍເອົາການຟັງເຣື່ອງພາຍໃນ 90 ວັນ, ທ່ານຈະສູນເສັຽສິດທິໃນການຟັງເຣື່ອງຂອງທ່ານ.
- ຖ້າຫາກວ່າທ່ານຢາກຈະຮັກສາການຄຸ້ມກັນຂອງທ່ານຢູ່ຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງອັນນີ້, ວັນທີສຸດຂາດແມ່ນ 10 ວັນ. ຈົ່ງເບິ່ງ **ການຄຸ້ມກັນທີ່ດຳເນີນຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ** ຢູ່ຂ້າງລຸ່ມນີ້.
- ທ່ານສາມາດກວດເບິ່ງກົດຣະບຽບຂອງການຟັງເຣື່ອງຄືນໄດ້ຢູ່ໃນກົດຫມາຍປົກຄອງຣັດວໍຊິງຕັນ (Washington Administrative Code) (WAC), ມາດຕຣາ 182-526.
- ທ່ານຈະບໍ່ມີສິດທິໃນການຟັງເຣື່ອງຖ້າຫາກວ່າການຄຸ້ມກັນຂອງທ່ານໄດ້ຖືກປະຕິເສດ, ສິ້ນສຸດລົງ, ຫລື ປ່ຽນແປງຍ້ອນການປ່ຽນແປງໃນກົດຫມາຍຂອງຣັດ ຫລື ຂອງຣັດຖະບານກາງ ແລະ ສະທ້ອນເຖິງທຸກໆຄົນຜູ້ທີ່ຈົດຊື່ເຂົ້າໃນໂຄງການຢ່າງອັດຕະໂນມັດຢູ່ໃນແບບດຽວກັນ (RCW 74.09.741(3)).

ຖ້າຫາກວ່າທ່ານມີຣາຍໄດ້ຕ່ຳ, ອົງການໃຫ້ຄຳແນະນຳການສຶກສາທາງກົດຫມາຍທີ່ປະສານງານກັນ ແລະ ການສົ່ງຕໍ່ (Coordinated Legal Education Advice and Referral) (CLEAR) ອາດຈະຊ່ວຍເຫລືອທ່ານຊອກເອົາການຊ່ວຍເຫລືອທາງກົດຫມາຍຟຣີໄດ້. ທ່ານສາມາດສະມັກເອົາໄດ້ທີ່: **http://nwjustice.org/clear-online,** ຫລື:

- ຖ້າຫາກວ່າອາຍຸຕ່ຳກວ່າ 60 ປີ, ໂທຫາ CLEAR ໄດ້ທີ່ເລກ 1-888-201-1014.
- ຖ້າຫາກວ່າອາຍຸ 60 ປີ ຫລື ແກ່ກວ່າ, ໂທຫາ CLEAR Senior ໄດ້ທີ່ເລກ 1-888-387-7111.

## ການຄຸ້ມກັນທີ່ດຳເນີນຕໍ່ໄປໃນຣະຫວ່າງການດຳເນີນການຟັງເຣື່ອງຈາກອຳນາດການປົກຄອງ

- ຖ້າຫາກວ່າພວກເຮົາສິ້ນສຸດການຄຸ້ມກັນ Washington Apple Health ຂອງທ່ານ, ທ່ານສາມາດເກັບຮັກສາການຄຸ້ມກັນຂອງທ່ານໄວ້ໄດ້ໃນຣະຫວ່າງການດຳເນີນການຟັງເຣື່ອງ.ຖ້າຫາກວ່າພວກເຮົາປ່ຽນແປງການຄຸ້ມກັນ Washington Apple Health ຂອງທ່ານ, ທ່ານສາມາດເກັບຮັກສາຣະດັບຂອງການຄຸ້ມກັນທີ່ຖືກອະນຸມັດມາແຕ່ກ່ອນຂອງທ່ານໄວ້ໄດ້ໃນຣະຫວ່າງການດຳເນີນການຟັງເຣື່ອງ.
- ເພື່ອຈະດຳເນີນການຄຸ້ມກັນຂອງທ່ານຕໍ່ໄປໃນໃນຣະຫວ່າງການດຳເນີນການຟັງເຣື່ອງ, ທ່ານຕ້ອງໄດ້ຮ້ອງຂໍເອົາການຟັງເຣື່ອງພາຍໃນ 10 ວັນຂອງການໄດ້ຮັບໃບແຈ້ງການໃບນີ້ຫລືກ່ອນທ້າຍຂອງເດືອນ, ບໍ່ວ່າອັນໃດມາຮອດນຳຫລັງ.
- ຖ້າຫາກວ່າທ່ານໄດ້ຮັບການຄຸ້ມກັນທີ່ດຳເນີນຕໍ່ໄປ ແລະ ຜ່າຍແພ້ການຟັງເຣື່ອງຂອງທ່ານ, ທ່ານຈະຕ້ອງໄດ້ຈ່າຍແທນຄືນຮອດ 60 ວັນຂອງການຄຸ້ມກັນທີ່ຖືກດຳເນີນຕໍ່ໄປ.
- ທ່ານບໍ່ສາມາດໄດ້ຮັບການຄຸ້ມກັນໃນຂະນະລໍຖ້າການຟັງເຣື່ອງເພື່ອຈະຄັດຄ້ານການປະຕິເສດໃນຄຳຮ້ອງຂໍ Washington Apple Health ຂອງທ່ານ.

## ການຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ

ເພື່ອຈະຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ, ຫລື ຖ້າຫາກວ່າທ່ານຕ້ອງການນາຍແປພາສາ ຫລື ຄວາມຊ່ວຍເຫລືອຢ່າງອື່ນເພື່ອຈະຮ້ອງຂໍເອົາການຟັງເຣື່ອງ, ຈົ່ງເຮັດແນວນຶ່ງຂອງສິ່ງຕໍ່ລົງໄປນີ້:

- ໂທຫາ 1-855-WAFINDER (1-855-923-4633) ຫລື 1-800-562-3022.
- ຂຽນຫນັງສືຮ້ອງຂໍເອົາການຟັງເຣື່ອງ ຫລື ຂຽນປະກອບຄຳຮ້ອງຂໍເອົາການຟັງເຣື່ອງຈາກອຳນາດການປົກຄອງ HCA 12-511 (ຊຶ່ງມີໄວ້ໃຫ້ຢູ່ທີ່ **http://www.hca.wa.gov/free-or-low-cost-health-care/forms-and-publications**) ແລະ ແຟກຊ໌ໄປທີ່ 1-360-586-9080; ຫລື
  ສົ່ງໄປສະນີທີ່:

  Health Care Authority
  PO Box 45504
  Olympia, WA 98504-5504

ພວກເຮົາຈະກວດເບິ່ງເອກສານຂອງທ່ານຄືນ ແລະ ພະຍາຍາມທີ່ຈະຕິດຕໍ່ຫາທ່ານເພື່ອຈະແກ້ໄຂບັນຫາກ່ອນການຟັງເຣື່ອງ.